**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ ເລກທີ 0540 /ກວຕ

ນະຄອນຫລວງວຽງຈັນ, ວັນທີ: 16 MAY 2017

## ຂໍ້ຕົກລົງ
## ຂອງລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ
## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ບັນຊີລາຍການກ່ຽວກັບມາດຕະຖານອຸປະກອນເຄື່ອງໃຊ້ໄຟຟ້າ ແລະ ເອເລັກໂຕຼນິກສາກົນມາເປັນມາດຕະຖານແຫ່ງຊາດລາວ ຈໍານວນ 100 ມາດຕະຖານ

- ອີງຕາມ ກົດໝາຍວ່າດ້ວຍມາດຕະຖານ (ສະບັບປັບປຸງ) ສະບັບເລກທີ 49/ສພຊ, ລົງວັນທີ 18 ກໍລະກົດ 2014
- ອີງຕາມບົດບັນທຶກກອງປະຊຸມ ຄະນະກໍາມະການສະພາມາດຕະຖານແຫ່ງຊາດ, ສະບັບເລກທີ 031/ກວຕ-ສມຊ, ລົງວັນທີ 27 ກໍລະກົດ 2016
- ອີງຕາມ ການສະເໜີຂອງປະທານສະພາມາດຕະຖານແຫ່ງຊາດ ສະບັບເລກທີ 030/ກວຕ-ສມຊ, ລົງວັນທີ 27 ກໍລະກົດ 2016

**ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕົກລົງ:**

ມາດຕາ 1. ເຫັນດີຮັບຮອງ ແລະ ປະກາດໃຊ້ບັນຊີລາຍການກ່ຽວກັບມາດຕະຖານອຸປະກອນເຄື່ອງໃຊ້ໄຟຟ້າ ແລະ ເອເລັກໂຕຼນິກສາກົນມາເປັນມາດຕະຖານແຫ່ງຊາດລາວ ຈໍານວນ 100 ມາດຕະຖານແຕ່ ສະບັບ ມລ 151-2016 ເຖິງ 250-2016 ຢ່າງເປັນທາງການ.

ມາດຕາ 2. ໃຫ້ຫ້ອງການ, ກົມ, ສະຖາບັນ ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງຈົ່ງຮັບຊາບ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 3. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ບໍ່ວຽງຄໍາ ວົງດາລາ